# ຄູ່ມືວິທີການເຮັດ
# ກັບດັກໂຕມອດເຈາະກາເຟ



ການປູກກາເຟ ມີບັນຫາກ່ຽວກັບການລະບາດຂອງໂຕມອດທີ່ມາເຈາະທຳລາຍໝາກກາເຟ ເຮັດໃຫ້ໝາກກາເຟເສຍຄຸນະພາບ, ຜົນຜະລິດຕົກຕ່ຳ ແລະ ລາຍຮັບລຸດລົງ.

## ວິທີການຄວບຄຸມ ແລະ ກຳຈັດມອດມີ 2 ວິທີ



- ອະນາໄມສວນກາເຟໃຫ້ສະອາດ ດ້ວຍການເກັບໝາກກາເຟດຳຄາຕົ້ນ ຫຼື ທີ່ຫຼົ່ນຕາມພື້ນສວນໃຫ້ໝົດ ແລະ ໝາກທີ່ມີໂຕມອດເຈາະນຳມາຕົ້ມ ຫຼື ເຜົາໄຟ.
- ໃສ່ກັບດັກກຳຈັດໂຕມອດກາເຟ.

## ອຸປະກອນການເຮັດກັບດັກ



ມີດຄັດເຕີ້



ສາຍລວດ



ຈານຢາງໄວ້ກັນນ້ຳຝົນ



ເຫຼັກເຈາະຮູ



ດ້າຍຝ້າຍ



ຕຸກຢາງສຳລັບ
ຜະສົມນ້ຳຢາ



ຕຸກນ້ຳເປົ່າ
1.5 ລິດ



ຕຸກຢາງຂະໜາດ
100 ຊີຊີ




ເຫຼົ້າເອຕາໂນນ




ເຫຼົ້າເມຕາໂນນ




ສານໂປເປລີນ




ນ້ຳທຳມະດາ

## ຂັ້ນຕອນວິທີການເຮັດກັບດັກ

- ໃຊ້ຄັດເຕີ້ຕັດຕຸກນ້ຳເປົ່າ 1.5 ລິດ ທັງສອງຂ້າງ, ໃຊ້ເຫຼັກເຈາະທັງສອງດ້ານ  ເພື່ອລະບາຍສານລໍ້ ແລະ ເປັນປະຕູເຂົ້າຂອງໂຕມອດ.
- ໃຊ້ເຫຼັກເຈາະດ້ານເທິງເພື່ອສອດສາຍລວດ.




- ໃຊ້ເຫຼັກເຈາະຈານກັນນ້ຳຝົນໃຫ້ເປັນຮູ




- ສຳລັບຕຸກຢາງ 100 ຊີຊີ ແມ່ນເຈາະຮູຝາ ແລ້ວສອດດ້າຍໃສ່



## ວິທີການປະສົມນ້ຳຢາ

### ການປະສົມສານລໍ້



ເຫຼົ້າເອຕາໂນນ 1 ສ່ວນ



ເຫຼົ້າເມຕາໂນນ 3 ສ່ວນ



ປະສົມໃຫ້ເຂົ້າກັນ ແລ້ວບັນຈຸ ໃນຕຸກ 100 ຊີຊີໃຫ້ເຕັມ

### ການປະສົມນ້ຳຢາຂ້າມອດ



ສານໂປເປລີນ 1 ສ່ວນ



ນ້ຳທຳມະດາ 3 ສ່ວນ




ປະສົມໃຫ້ເຂົ້າກັນແລ້ວນຳມາໃສ່ ຕຸກທີ່ໄດ້ກຽມໄວ້

## ວິທີການປະກອບກັບດັກ

ພາຍຫຼັງກະກຽມອຸປະກອນທັງໝົດແລ້ວໃຫ້ນຳອຸປະກອນ ແຕ່ລະສ່ວນມາປະກອບເຂົ້າກັນ




### ຂໍ້ຄວນລະວັງໃນການນຳໃຊ້ສານລໍ້ ແລະ ສານຂ້າມອດ

- ຫ້າມດື່ມ, ເວລາຜະສົມແມ່ນຫ້າມເຮັດໃກ້ກອງໄຟເພາະມັນເປັນວັດຖຸໄວໄຟ ແລະ ຕິດໄຟງ່າຍ
- ສານລໍ້ ແລະ ນ້ຳຢາຂ້າມອດຈະບໍ່ເປັນອັນຕະລາຍຕໍ່ຜູ້ໃຊ້, ເປັນມິດຕໍ່ສິ່ງແວດລ້ອມ ແລະ ບໍ່ທຳລາຍຕົ້ນກາເຟ



## ວິທີໃຊ້

ໃຊ້ເກາະເທິງຕົ້ນກາເຟ ຫ່າງຈາກໜ້າດິນປະມານ 1.5 ແມັດ, 1 ເຮັກຕາໃຊ້ຢູ່ປະມານ 20-25 ກັບດັກ.



## ຄຳແນະນຳ

ຫຼັງຈາກໃສ່ກັບດັກແລ້ວທຸກໆສອງອາທິດຕ້ອງໄປຕື່ມນ້ຳຢາສານລໍ້ ແລະ ສານຂ້າໂຕມອດເພີ່ມອີກ.



ສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ເວັບໄຊທ www.laocoffee.org

ວິດີໂອ: ວິທີການເຮັດກັບດັກມອດເຈາະກາເຟ

ສະໜັບສະໜູນໂດຍ: ___

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ LURAS Lao Upland Rural Advisory Service